Washington State Health Care Authority

# ແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare ຈະຊ່ວຍປະຢັດເງິນໃນ Medicare

ຫຼາຍກວ່າ $2,400 ຕໍ່ປີ

**ຊ່ວຍໃຫ້ທ່ານມີເງິນເຫຼືອເພີ່ມຂຶ້ນໃນແຊັກປະກັນສັງຄົມຂອງທ່ານ!**

## ກ່ຽວກັບແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare

ມີສີ່ແຜນງານໃນລັດ Washington:

### ແຜນງານທີ 1
### ແຜນງານຜູ້ຮັບຜົນປະໂຫຍດ Medicare ທີ່ມີຄຸນສົມບັດ (QMB)

- ຈ່າຍເບ້ຍປະກັນ ສ່ວນ A ແລະ ສ່ວນ B
- ຈ່າຍຄ່າໃຊ້ຈ່າຍສ່ວນທຳອິດ (deductibles)
- ຈ່າຍຄ່າບໍລິການຮ່ວມ (co-payments) ຍົກເວັ້ນຄ່າຢາຕາມໃບສັ່ງແພດ

### ແຜນງານທີ 2
### ຜູ້ຮັບຜົນປະໂຫຍດ Medicare ທີ່ມີລາຍໄດ້ຕໍ່າຕາມທີ່ກຳນົດໄວ້ (SLMB)

- ຈ່າຍເບ້ຍປະກັນ ສ່ວນ B

### ແຜນງານທີ 3
### ແຜນງານບຸກຄົນທີ່ມີຄຸນສົມບັດ (QI-1)

- ຈ່າຍເບ້ຍປະກັນ ສ່ວນ B

### ແຜນງານທີ 4
### ຄົນພິການທີ່ຍັງເຮັດວຽກແບບຜ່ານຄຸນສົມບັດ (QDWI)*

- ຈ່າຍເບ້ຍປະກັນ ສ່ວນ A

## ກວດເບິ່ງວ່າ ທ່ານມີຄຸນສົມບັດ ຫຼື ບໍ່

ນຳໃຊ້ແຜ່ນວຽກສ່ວນຕົວນີ້.

ປະຕິບັດຕາມຂັ້ນຕອນງ່າຍໆລຸ່ມນີ້ ແລະ ປຽບທຽບຍອດລວມກັບຕາຕະລາງດ້ານລຸ່ມ ເພື່ອເບິ່ງວ່າທ່ານອາດມີຄຸນສົມບັດສຳລັບແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare ຫຼື ບໍ່.

1. ຂຽນ**ລວມ**ລາຍໄດ້ຄົວເຮືອນລາຍເດືອນຂອງທ່ານ: $________________
2. ຫັກອອກ $20 (ຫັກອອກໜຶ່ງຄັ້ງຕໍ່ຄົວເຮືອນ): $________________
3. ***ລາຍໄດ້ທັງໝົດ:*** $________________
4. ຖ້າລາຍໄດ້ລາຍເດືອນຂອງທ່ານຢູ່ໃນລະດັບ ຫຼື ຕໍ່າກວ່າລະດັບໃດໜຶ່ງໃນຕາຕະລາງຂ້າງລຸ່ມ, ທ່ານອາດມີຄຸນສົມບັດສຳລັບໜຶ່ງໃນແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare.

## ມາດຕະຖານລາຍໄດ້ຂອງແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare

| ປະເພດຂອງແຜນງານ Medicare | ລາຍໄດ້ຕໍ່ເດືອນ (ບຸກຄົນ) | ລາຍໄດ້ຕໍ່ເດືອນ (ຄູ່ຜົວເມຍ) |
|---|---|---|
| ແຜນງານທີ 1 QMB | ສູງເຖິງ $1,483 | ສູງເຖິງ $2,004 |
| ແຜນງານທີ 2 SLMB | ສູງເຖິງ $1,616 | ສູງເຖິງ $2,185 |
| ແຜນງານທີ 3 QI-1 | ສູງເຖິງ $1,855 | ສູງເຖິງ $2,510 |
| ແຜນງານທີ 4 QDWI* | ສູງເຖິງ $2,680 | ສູງເຖິງ $3,628 |

***ມີຜົນສັກສິດແຕ່ວັນທີ 4/1/2026**

*ແຜນງານ QDWI ສຳລັບຄົນພິການທີ່ຍັງເຮັດວຽກ ມີການຫັກລາຍໄດ້ຈາກການເຮັດວຽກແບບພິເສດ ດັ່ງນັ້ນທ່ານຈະຕ້ອງໄດ້ໂທຫາເພື່ອຂໍຄວາມຊ່ວຍເຫຼືອເພື່ອກວດສອບເງື່ອນໄຂສິດສຳລັບແຜນງານນີ້.*

## ຂ້ອຍຈະສະໝັກໄດ້ແນວໃດ?

*ມັນງ່າຍຫຼາຍ! ຕິດຕໍ່ຜ່ານຊ່ອງທາງໃດໜຶ່ງດັ່ງຕໍ່ໄປນີ້:*

- ຊອກຫາ ສຳນັກງານບໍລິການຊຸມຊົນ (CSO) ທີ່ຢູ່ໃກ້ທ່ານ: **dshs.wa.gov/office-locations**
- ທາງອິນເຕີເນັດ, ເຂົ້າໄປທີ່ເວັບໄຊນີ້: **washingtonconnection.org/home/**
- ທ່ານສາມາດໂທຫາ ອົງການເບິ່ງແຍງສຸຂະພາບ (Health Care Authority - HCA) ທີ່ເບີ 1-800-562-3022, ຕໍ່ 16129 ເພື່ອໃຫ້ເຂົາເຈົ້າສົ່ງໃບສະໝັກທາງໄປສະນີໃຫ້ທ່ານ.
- ຕິດຕໍ່ທີ່ປຶກສາດ້ານຜົນປະໂຫຍດປະກັນໄພສຸຂະພາບທົ່ວລັດ (Statewide Health Insurance Benefit Advisor - SHIBA) ທີ່ເບີ 1-800-562-6900 ແລະ ຂໍໃຫ້ເຊື່ອມຕໍ່ກັບສຳນັກງານ SHIBA ໃນທ້ອງຖິ່ນຂອງທ່ານ.
- ສຳລັບການຊ່ວຍເຫຼືອເພີ່ມເຕີມ (Extra Help) ຂອງ Medicare ສ່ວນ D

  ຕິດຕໍ່ອົງການປະກັນສັງຄົມ (Social Security Administration) ທີ່ເບີ 1-800-772-1213 ຫຼື ເຂົ້າເບິ່ງ: **ssa.gov/medicare/part-d-extra-help**

## ຫາກທ່ານເປັນຜູ້ໄດ້ຮັບຜົນປະໂຫຍດ Medicare

ທ່ານອາດມີຄຸນສົມບັດສຳລັບແຜນງານທີ່ສາມາດຊ່ວຍທ່ານປະຢັດເງິນໄດ້ຫຼາຍກວ່າ $2,200 ຕໍ່ປີ. ແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare ຊ່ວຍເຫຼືອຜູ້ທີ່ມີຄຸນສົມບັດໂດຍການຈ່າຍເບ້ຍປະກັນຂອງ Medicare, ຄ່າໃຊ້ຈ່າຍສ່ວນທຳອິດ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບ Medicare. ທ່ານສາມາດມີທັງ Medicare ແບບມາດຕະຖານ ຫຼື ແຜນງານເບິ່ງແຍງສຸຂະພາບທີ່ມີການຈັດການ (managed care plan) ຂອງ Medicare.

## ການສະໝັກງ່າຍໆ.

ໂທຫາພວກເຮົາໃນມື້ນີ້ເພື່ອສອບຖາມຂໍ້ມູນ ແລະ ຂໍຄວາມຊ່ວຍເຫຼືອ — ທ່ານອາດຈະໄດ້ຮັບເງິນກັບຄືນເຂົ້າໃນຖົງຂອງທ່ານ!

## ຄ່າໃຊ້ຈ່າຍປະເພດໃດແດ່ທີ່ໄດ້ຮັບການຄຸ້ມຄອງ?

ແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare ອາດຄຸ້ມຄອງລາຍຈ່າຍດັ່ງຕໍ່ໄປນີ້:

- ເບ້ຍປະກັນ ສ່ວນ A
- ເບ້ຍປະກັນ ສ່ວນ B
- ຄ່າປະກັນໄພຮ່ວມ (co-insurance) ຂອງ Medicare
- ຄ່າໃຊ້ຈ່າຍສ່ວນທຳອິດ (deductibles) ຂອງ Medicare

## ຂ້ອຍຈະຮູ້ໄດ້ແນວໃດວ່າຂ້ອຍມີຄຸນສົມບັດ?

ມີຄົນຫຼາຍພັນຄົນໃນລັດ Washington ທີ່ມີຄຸນສົມບັດສຳລັບແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare. ເພື່ອກວດເບິ່ງວ່າທ່ານມີເງື່ອນໄຂສິດ ຫຼື ບໍ່, ໃຫ້ເບິ່ງຕາຕະລາງລາຍໄດ້ໃນໃບປິວນີ້. ຖ້າລາຍໄດ້ຕໍ່ເດືອນຂອງທ່ານຢູ່ໃນລະດັບ ຫຼື ຕ່ຳກວ່າລະດັບໃດໜຶ່ງໃນຕາຕະລາງດ້ານເທິງ, ທ່ານອາດມີຄຸນສົມບັດສຳລັບໜຶ່ງໃນແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare.

## ຜົນປະໂຫຍດເຫຼົ່ານີ້ຈະມີຜົນກະທົບຕໍ່ຊັບສິນມໍລະດົກຂອງຂ້ອຍ ຫຼື ບໍ່?

ບໍ່, ຈະບໍ່ມີການຮຽກຄືນຊັບສິນ (estate recovery) ສຳລັບແຜນງານຊ່ວຍປະຢັດຄ່າໃຊ້ຈ່າຍ Medicare.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອພິເສດ ຫຼື ຕ້ອງການເອກະສານໃນຮູບແບບ ຫຼື ພາສາອື່ນ, ກະລຸນາໂທຫາ 1-800-562-3022 (TRS: 711).



